ທາງເລືອກເອົາການບໍຣິການ CFC

Community First Choice

ກ່ຽວກັບການບໍຣິການ CFC

ການບໍຣິການທີ່ຖືກບົ່ງຢູ່ ແມ່ນການບໍຣິການທີ່ຖືກເອື້ອເຟື້ອໃຫ້ພາຍໃຕ້ໂຄງການ Community First Choice (CFC) ສຳລັບລູກຄ້າຜູ້ທີ່ມີເງື່ອນໄຂໄດ້ຮັບ.ມັນມີຂອບເຂດວ່າການບໍຣິການແຕ່ລະຢ່າງເທົ່າໃດທີ່ທ່ານຈະເລືອກເອົາໄດ້. ມັນມີຄົນຫລາຍຄົນ,ທາງເລືອກ ແລະ ຫລ່ງຊ່ວຍເຫລືອຫລາຍບ່ອນເພື່ອຈະຊ່ວຍເຫລືອໃນເວລາທີ່ທ່ານພິຈາລະນາເບິ່ງທາງເລືອກຂອງທ່ານ.

ການເບິ່ງແຍງດູແລສ່ວນຕົວ ແລະ ການເບິ່ງແຍງດູແລຜ່ອນເບົາ

ການບໍຣິການເບິ່ງແຍງດູແລສ່ວນຕົວໃຫ້ຄວາມຊ່ວຍເຫລືອນຳພາລະກິດປະຈຳວັນເຊັ່ນວ່າການອາບນ້ຳ, ການນຸ່ງເຄື່ອງ, ຫລື ການຄວບຄຸມເບິ່ງນຳປາຂອງທ່ານ. ຖ້າຫາກວ່າທ່ານມີເງື່ອນໄຂໄດ້ຮັບ, ທ່ານເລືອກເອົາຜູ້ໃຫ້ການບໍຣິການທີ່ມີຄຸນນະວຸດທິ ແລະ ບ່ອນທີ່ທ່ານຢາກຈະໄດ້ຮັບການເບິ່ງແຍງດູແລຂອງທ່ານ. ຂຶ້ນນຳຣາຍໄດ້ຂອງທ່ານ, ກົມ DSHS ຍັງຈະຈ່າຍການບໍຣິການເຫລົ່ານີ້ທັງຫມົດຫລືສ່ວນນຶ່ງ. ກົມ DSHS ຍັງຈະຈ່າຍເງິນໃຫ້ສຳລັບການຝຶກຝົນຜູ້ເບິ່ງແຍງດູແລພື້ນຖານສຳລັບຜູ້ໃຫ້ການເບິ່ງແຍງດູແລທີ່ມີຄຸນນະວຸດທິທຸກໆຄົນ.

ອັນນີ້ແມ່ນທາງເລືອກສຳລັບບ່ອນທີ່ທ່ານສາມາດໄດ້ຮັບການບໍຣິການເບິ່ງແຍງດູແລສ່ວນຕົວ:

- ✓ ເຮືອນຂອງທ່ານ
- ✓ ເຮືອນຄອບຄົວຜູ້ໃຫຍ່
- ✓ ສະຖານທີ່ອາສັຍຢູ່ທີ່ມີຄົນຊ່ວຍເຫລືອ

ຈະຄວບຄຸມເບິ່ງນຳຜູ້ໃຫ້ການເບິ່ງແຍງດູແລ ແລະ ເປັນນາຍຈ້າງໄດ້ແນວໃດ

ຜູ້ໃຫ້ການເບິ່ງແຍງດູແລຂອງທ່ານເປັນພາກສ່ວນສຳຄັນຂອງຄະນະທີມງານເບິ່ງແຍງດູແລຂອງທ່ານ. ຖ້າຫາກວ່າທ່ານອາສັຍຢູ່ໃນເຮືອນ ຫລື ກຳລັງຄິດວ່າຈະຍ້າຍໄປຢູ່ເຮືອນຂອງທ່ານເອງ, ທ່ານຈະຕ້ອງໄດ້ຄວບຄຸມເບິ່ງນຳວຽກງານປະຈຳວັນຂອງຜູ້ໃຫ້ການເບິ່ງແຍງດູແລຂອງທ່ານ. ເຄື່ອງມືຂອງການຝຶກຝົນມີໄວ້ໃຫ້ທີ່ຈະອະທິບາຍວ່າຈະເລືອກເອົາ, ຄວບຄຸມເບິ່ງນຳ, ແລະ ໄລ່ຜູ້ໃຫ້ການເບິ່ງແຍງດູແລອອກໄດ້ແນວໃດ.

ເອກສານເຫລົ່ານີ້ຈະມີໄວ້ໃຫ້ແກ່ລູກຄ້າທຸກໆຄົນທີ່ຮ້ອງຂໍເອົາຣາຍຣະອຽດເຫລົ່ານີ້.ສອບຖາມນຳຜູ້ຈັດການເອກສານຂອງທ່ານຖ້າຫາກວ່າທ່ານຢາກໄດ້ປຶ້ມນ້ອຍຄູ່ມື,ການຝຶກຝົນທາງວິດີໂອຢູ່ໃນ DVD, ຫລືເຄືອຂ່າຍຕໍ່ໄປຫາການຝຶກຝົນທາງວິດີໂອຢູ່ໃນແວບໄຊທ້ຂອງກົມ DSHS.

ການເບິ່ງແຍງດູແລຜ່ອນເບົາ

ເມື່ອເວລາທ່ານອາສັຍຢູ່ໃນເຮືອນຂອງທ່ານເອງ, ການເບິ່ງແຍງດູແລຜ່ອນເບົາຈ່າຍເງິນໃຫ້ຜູ້ໃຫ້ການເບິ່ງແຍງດູແລສຳລອງເພື່ອຈະໃຫ້ການຜ່ອນເບົາຣະຍະສັ້ນສຳລັບຜູ້ໃຫ້ການເບິ່ງແຍງດູແລຂອງທ່ານ. ຜູ້ໃຫ້ການເບິ່ງແຍງດູແລຜ່ອນເບົາສາມາດຖືກໃຊ້ເພື່ອຈະໃຫ້ເວລາພັກຜ່ອນແກ່ຜູ້ໃຫ້ການເບິ່ງແຍງດູແລປົກກະຕິຂອງທ່ານ, ຫລື ເຂົ້າມາແຮັດວຽກແທນຖ້າຫາກວ່າຜູ້ໃຫ້ການເບິ່ງແຍງດູແລຕາມປົກກະຕິຂອງທ່ານບໍ່ສະບາຍ ຫລື ບໍ່ວ່າງ. ທ່ານພິຈາຣະນາເບິ່ງວ່າຊົ່ວໂມງແຮັດວຽກທີ່ຖືກອະນຸມັດໃຫ້ຈັກຊົ່ວໂມງຈະຖືກໃຊ້ສຳລັບຜູ້ໃຫ້ການເບິ່ງແຍງດູແລຜ່ອນເບົາ.

ການຝຶກຝົນການເອົາຄວາມຊຳນານມາໃຫ້ໄດ້

ການຝຶກຝົນການເອົາຄວາມຊຳນານມາໃຫ້ໄດ້ຈະເອົາການຝຶກຝົນໃຫ້ຖ້າຫາກວ່າທ່ານຕ້ອງການເພື່ອຈະເຮັດພາລະກິດໃຫ້ແລ້ວໄດ້ຢ່າງມີອິດສະຣະຫລາຍກວ່າ. ທ່ານຈະຕ້ອງການທີ່ຈະຮູ້ນຮູ້ວ່າຈະຈັດແຈງຄາບເຂົ້າ ຫລື ທຳການຊັກເຄື່ອງຂອງທ່ານໄດ້ແນວໃດ. ການຝຶກຝົນໃນພາລະກິດປະຈຳວັນຈະມີໄວ້ໃຫ້ຢູ່ໃນເຮືອນຂອງທ່ານ, ຫລືຢູ່ໃນສະຖານທີ່ບ່ອນທີ່ພາລະກິດເກີດຂຶ້ນ.

ເທັກໂນໂລຈີຊ່ວຍເຫລືອ

ເຄື່ອງເທັກໂນໂລຈີຊ່ວຍເຫລືອສາມາດຊ່ວຍເຫລືອທ່ານໃຫ້ສຳເຣັດພາລະກິດໂດຍປາສຈາກຄວາມຊ່ວຍເຫລືອຂອງຄົນອື່ນໆ ຫລື ຊ່ວຍເຫລືອທ່ານກາຍເປັນອິດສະຣະພາບຫລາຍກວ່າໃນພາລະກິດປະຈຳວັນ.

ເພື່ອຈະໄດ້ເຄື່ອງເທັກໂນໂລຈີຊ່ວຍເຫລືອ, ທ່ານຄວນຈະຕິດຕໍ່ຫາທ່ານຫມໍຂອງທ່ານ ແລະ ຂໍເອົາການສົ່ງຕໍ່ໄປເອົາການຕົວຣາຄາປະເມີນຜົນໂດຍທ່ານຫມໍບຳບັດ. ທ່ານຫມໍບຳບັດຈະແນະນຳເຄື່ອງເທັກໂນໂລຈີທີ່ຖືກຕ້ອງສຳລັບທ່ານ ແລະ ຊ່ວຍເຫລືອທ່ານຮຽນຮູ້ວ່າຈະໃຊ້ມັນແນວໃດເມື່ອທ່ານໄດ້ຮັບມັນ.

ຣະບົບການຕອບຕໍ່ເຫດການສຸກເສີນສ່ວນຕົວ (PERS)

PERS ແມ່ນເຄື່ອງເອເລກໂຕຣນິກທີ່ຕິດຕໍ່ກັບໂທຣະສັບຂອງທ່ານຊຶ່ງຈະເຮັດໃຫ້ທ່ານໄດ້ຮັບຄວາມຊ່ວຍເຫລືອໃນເຫດການສຸກເສີນ. ເມື່ອເປີດໃຊ້ການໄດ້, ພະນັກງານຢູ່ສູນກາງຕອບຈະປະຕິບັດຕາມຄຳຊີ້ນຳທີ່ທ່ານໄດ້ເອົາໃຫ້ເພື່ອຈະໂທເອົາຄວາມຊ່ວຍເຫລືອ.

ການບໍຣິການເທັກໂນໂລຈີຊ່ວຍເຫລືອມີໄວ້ໃຫ້ຖ້າຫາກວ່າທ່ານມີເງື່ອນໄຂທີ່ຈະໃຫ້ເຄື່ອງ PERS ຂອງທ່ານຕິດຕັ້ງດ້ວຍການຄົ້ນພົບການລົ້ມ, ການຊອກເບິ່ງ GPS, ຫລື ຣະບົບການຄວບຄຸມນຳຢາ.

ບໍ່ແມ່ນວ່າຫມົດທຸກຄົນຈະມີເງື່ອນໄຂທີ່ຈະໄດ້ຮັບ PERS. ຜູ້ກຳກັບເວກສານຂອງທ່ານຈະຊ່ວຍເຫລືອທ່ານພິຈາຣະນາເບິ່ງວ່າທ່ານມີເງື່ອນໄຂໄດ້ຮັບຣະບົບເຫລົ່ານີ້ ຫລື ບໍ່.

ການບໍຣິການປ່ຽນແປງໃສ່ຊຸມນຸມອິນ

ການບໍຣິການປ່ຽນແປງໃສ່ຊຸມນຸມອິນສາມາດຊ່ວຍເຫລືອທ່ານຍ້າຍຈາກສະຖານທີ່ລ້ຽງຜູ້ເຖົ້າ ຫລື ໂຮງພະຍາບານຂອງຣັດເຂົ້າມາຢູ່ໃນຊຸມນຸມອິນ. ທ່ານຈະເລືອກເອົາທີ່ຈະຍ້າຍໄປຢູ່ເຮືອນຂອງທ່ານເອງ, ຫລື ໄປຢູ່ເຮືອນຄອບຄົວຜູ້ໃຫຍ່ ຫລື ສະຖານທີ່ອາສັຍຢູ່ທີ່ມີຄົນຊ່ວຍເຫລືອ.

Washington State Department of Social & Health Services

Transforming lives

DSHS-22-1616 LA (9/15)